ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ

ກົມສາມັນແລະອະນຸບານສຶກສາ

<u>ຫົວບົດສອບເສັງ</u>                    ວິຊາ ຟີຊິກສາດ

ສອບເສັງຈົບຊັ້ນ ມ.6 ສາຍສາມັນ ສົກຮຽນ 1995-96

ສອບເສັງຄັ້ງວັນທີ 18 ມິຖຸນາ 1996                    *<u>ເວລາ:</u>* 120 ນາທີ

*<u>ຄຳຖາມ 1:</u>* ຈົ່ງແຕ້ມຮູບສະແດງການເກີດຮູບຂອງວັດຖຸໜຶ່ງ ຜ່ານແວ່ນກົມຫຼຸບ, ພ້ອມທັງອະທິບາຍລັກສະນະຂອງຮູບທີ່ເກີດຂຶ້ນໃນແຕ່ລະກໍລະນີດັ່ງລຸ່ມນີ້:

1.1. ໃຫ້ວັດຖຸ AB ວາງຢູ່ບ່ອນຈຸດ F

1.2. ໃຫ້ວັດຖຸ AB ວາງຢູ່ລະຫວ່າງຈຸດ F ແລະ C (3 ຄະແນນ)

*<u>ຄຳຖາມ 2:</u>* ຄວາມຕ້ານໄຟຟ້າສອງອັນມີຄ່າ ອັນລະ 1 Ω ເທົ່າກັນ ຕໍ່ຂະໜານກັນ ແລະ ຕໍ່ເຂົ້າກັບບໍ່ໄຟຟ້າ ທີ່ມີຄວາມຕ້ານໄຟຟ້າພາຍໃນ ( r ) = 0,5 Ω ຜົນລົບລະດັບໄຟຟ້າ ລະຫວ່າງ ຂົ້ວທັງສອງຂອງບໍ່ໄຟຟ້າມີຄ່າ 1 V. ຖ້າເພິ່ນເອົາຄວາມຕ້ານໄຟຟ້າ R ອີກອັນໜຶ່ງມາຕໍ່ຕື່ມເຂົ້າໃນສາຍຮອບ ເປັນແບບລຽນກັບຄວາມຕ້ານໄຟຟ້າສອງອັນທຳອິດ, ປາກົດວ່າ ຜົນລົບລະດັບໄຟຟ້າ ລະຫວ່າງ ຂົ້ວທັງສອງຂອງບໍ່ໄຟຟ້າມີຄ່າ 1,5 V. ຖາມວ່າ ຄວາມຕ້ານໄຟຟ້າ R ທີ່ເພິ່ນຕໍ່ຕື່ມເຂົ້າໃນສາຍຮອບນັ້ນມີຄ່າເທົ່າໃດ? (4 ຄະແນນ)

*<u>ຄຳຖາມ 3:</u>* ເພິ່ນຕ້ອງການເຄືອບສາຍແຂນເສັ້ນໜຶ່ງ ໂດຍໃຫ້ໄດ້ເງິນເຄືອບຫຸ້ມຢູ່ 15 ກຣາມ. ເພິ່ນໄດ້ໃຊ້ບໍ່ກຳເນີດໄຟຟ້າ ທີ່ສົ່ງກະແສໄຟຟ້າອອກ 0,5 A ແລ່ນຜ່ານອ່າງວິເຄາະໄຟຟ້າ ທີ່ບັນຈຸນິຕຣາດເງິນ ( $AgNO_3$ ) ແລະ ອາໂນດເຮັດດ້ວຍເງິນ ( ຮູ້ວ່າ Ag = 108 ແລະ n = 1 )

3.1. ຈົ່ງຊອກຫາໄລຍະເວລາທີ່ປ່ອຍກະແສໄຟຟ້າຜ່ານ ເພື່ອໃຫ້ໄດ້ເງິນເຄືອບຫຸ້ມຕາມຕ້ອງການ 15 g ນັ້ນ ?

3.2. ຈົ່ງຊອກຫາພະລັງງານໄຟຟ້າ ທີ່ບໍ່ກຳເນີດໄຟຟ້າສົ່ງອອກຕາມສາຍຮອບນອກຖ້າວ່າ ຜົນລົບລະດັບໄຟຟ້າຢູ່ລະຫວ່າງ 2 ຂົ້ວຂອງບໍ່ກຳເນີດໄຟຟ້າ ແມ່ນ 9 V. ( 3 ຄະແນນ )

ຄະນະກຳມະການອອກຫົວບົດສອບເສັງ

ກົມສາມັນແລະອະນຸບານສຶກສາ